78

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 076 /ທຄຕລ 2021
ນະຄອນຫຼວງວຽງຈັນ, ວັນທີ: 31 AUG 2021

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາໂຮງພິມພາກລັດ ແລະ ເອກະຊົນ ພາຍໃນ ນະຄອນຫຼວງ ທີ່ນັບຖື.
**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນ ແບບຟອມ ຂອງ ທຄຕລ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງເຊີນມາຍັງທ່ານຜູ້ສະໜອງ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນລາຄາ ປື້ມຝາກມີກຳນົດ (ສີຂາວ), ໃບມອບເງິນສົດ ແລະ ໃບຢັ້ງຢືນທຸລະກຳ ເພື່ອຮັບໃຊ້ເຂົ້າໃນວຽກງານວິຊາສະເພາະຂອງທະນາຄານ ລາຍລະອຽດສິນຄ້າ ມີດັ່ງຕາຕະລາງລຸ່ມນີ້:

| ລ/ດ | ຮູບ | ລາຍການ |
|---|---|---|
| 1 |  | - ປື້ມຝາກມີກຳນົດ (ສີຂາວ) ຈຳນວນ 15.000 ຫົວ.<br>- ຂະໜາດ 15.1*8.1 ຊມ, ປົກໃຊ້ເຈ້ຍອາດດ້ານ 110 g ພິມ 04 ສີ 01 ໜ້າ ເຄືອບດ້ານ 01 ໜ້າ, ເນື້ອໃນໃຊ້ເຈ້ຍປອນ 100 ແກຼມ ພິມ 01 ສີ 02 ໜ້າ, ລວມມີ 18 ໜ້າ, ເຂົ້າເຫຼັ້ມຫຍິບເນື້ອໃນແລ້ວຕິດປົກ.<br>- ການຫຸ້ມຫໍ່ ແມ່ນ 100 ຫົວ/ຫໍ່ (ແພັກດ້ວຍຖົງຢາງໃສ), 10 ຫໍ່/ແກັດ, ຕິດສິນຄ້າ ພ້ອມ ລະບຸລາຍລະອຽດ, ຈຳນວນ ສິນຄ້າແຕ່ລະແກັດ. |
| 2 |  | - ໃບມອບເງິນສົດ ຈຳນວນ 1.500.000 ຊຸດ.<br>- ເຈ້ຍເຄມີ 3 ໃບ/ຊຸດ ( ຍີ່ຫໍ້ Oji ເກດ A ), ຂະໜາດ 16*18,8 ຊມ, ພິມ 4 ສີ ທຸກໜ້າ, ທາກາວແຍກຊຸດ.<br>- ການຫຸ້ມຫໍ່ ແມ່ນ 500 ຊຸດ/ຫໍ່, 5ຫໍ່/ມັດ, ຕິດສິນຄ້າ ພ້ອມ ລະບຸລາຍລະອຽດ, ຈຳນວນ ສິນຄ້າແຕ່ລະຫໍ່. |
| 3 |  | - ແບບຟອມ ໃບຢັ້ງຢືນທຸລະກຳ ຂອງ ທຄຕລ ຈຳນວນ 3.000.000 ຊຸດ.<br>- ຂະໜາດ: 17.5 x 21 ຊມ.<br>- ເຈ້ຍເຄມີ 02 ໃບ/ຊຸດ ( ຍີ່ຫໍ້ Oji ເກດ A ).<br>- ພິມສີທຸກໜ້າ, ຕິດກາວຫົວ 02 ໃບ/ຊຸດ.<br>- ການຫຸ້ມຫໍ່ ແມ່ນ 500 ຊຸດ/ຫໍ່, 05ຫໍ່/ມັດ, ຕິດສິນຄ້າ ພ້ອມ ລະບຸລາຍລະອຽດ , ຈຳນວນ ສິນຄ້າແຕ່ລະຫໍ່.<br>- |

➢ **ເອກະສານຊອງທີ 1 (ບໍ່ປິດຊອງ)**

1. ສຳເນົາ ໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ ປະຈຳປີ 2021, ໃບຢັ້ງຢືນການມອບພັນທະອາກອນຢ່າງໜ້ອຍ ປີ 2020 ແລະ ປະສົບການໃນໄລຍະຜ່ານມາ (ຕ້ອງເປັນໂຮງພິມທີ່ມີປະສົບການ ຫຼື ດຳເນີນທຸລະກິດສິ່ງພິມຢ່າງໜ້ອຍ 03 ປີຂຶ້ນໄປ).

ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

2. ກະລຸນາ ຄັດຕິດຕົວຢ່າງເຈ້ຍ/ແບບຟອມ ມາພ້ອມ ຢ່າງໜ້ອຍຕົວຢ່າງລະ 01 ຫົວ/ອັນ/ຊຸດ (ຕາມຂະໜາດແບບຟອມຂອງ ທຄຕລ ທີ່ນໍາໃຊ້ປະຈຸບັນ, ສໍາລັບເຈ້ຍຕ້ອງເປັນເຈ້ຍຄຸນະພາບ ເກຼດ A).
3. ໃບສະເໜີ ພ້ອມລະບຸ ລາຍການແບບຟອມ ທີ່ຕ້ອງການເຂົ້າຮ່ວມໃຫ້ລະອຽດ: ຂະໜາດ, ຄຸນະພາບ, ຍີ່ຫໍ້ເຈ້ຍ ແລະ ກໍານົດເວລາຈັດສົ່ງຂອງສິນຄ້າແຕ່ລະລາຍການໃຫ້ຊັດເຈນ.
4. ກໍານົດຍື່ນຊອງ ກ່ອນວັນຈັນ, ວັນທີ **13/09/2021 ເວລາ 11:00 ໂມງ** ທີ່ພະແນກຫ້ອງການບໍລິຫານ-ການເງິນ ສໍານັກງານໃຫຍ່, ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 04 ຕຶກ C.

➢ **ເອກະສານຊອງທີ 2 (ປິດຊອງ)**

1. ໃບສະເໜີລາຄາໃຫ້ລະບຸເປັນສະກຸນເງິນກີບ, ລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມອາກອນມູນຄ່າເພີ່ມໃຫ້ຄົບຖ້ວນ.
2. ວັນສຸກ, ທີ **17/09/2021 ເວລາ 9:30 ໂມງ** ແມ່ນມື້ເປີດຊອງປະມູນ, ສະນັ້ນ ໂຮງພິມ ຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 03 ຕຶກ C.
3. ໂຮງພິມຜູ້ສະໜອງ ຕ້ອງລະບຸເງື່ອນໄຂຕ່າງໆ ມາໃຫ້ຄົບຖ້ວນ ແລະ ໃຫ້ກົງກັບຄວາມຕ້ອງການໃນຕາຕະລາງຂ້າງເທິງນັ້ນ.
4. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 17/10/2021)** ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

<u>**ໝາຍເຫດ:**</u> ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກໍານົດຂ້າງເທິງ.

❖ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**
- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄ້ຳປະກັນການປະຕິບັດສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທໍານຽມໃນການຈົດທະບຽນສັນຍາແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.

❖ **ການຊໍາລະແບ່ງຈ່າຍ ງວດດຽວ ພາຍຫຼັງສົ່ງເຄື່ອງຄົບຕາມຈໍານວນ ແລະ ກວດກາຄວາມຖືກຕ້ອງຈາກຄະນະກໍາມະການຂອງ ທຄຕລ ພາຍໃນ 30 ວັນລັດຖະການ.**

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຜູ້ມີຄວາມສົນໃຈ ຍື່ນຊອງເຂົ້າຮ່ວມການປະມູນລາຄາໃນຄັ້ງນີ້ດ້ວຍ.

ຜູ້ອໍານວຍການ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ຄໍາພຸດ ສິດທິລາດ